ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ໜອງຄັ້ນຄູ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ. ໂທລະສັບ: 030 9882809, ແຟັກ:(856-21)
BAN NONGKUNKU, NAXAYTHONG DISTRICT, VIENTIANE CAPITAL. TEL: 030 9882809, FAX: (856-21)

ນະຄອນຫຼວງວຽງຈັນ, ວັນທີ 27/04/2026

# ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025
# ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ("ບໍລິສັດ" ຫຼື "ລອທ") ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ("ກອງປະຊຸມ") ເມື່ອວັນທີ 27 ເມສາ 2026 ເວລາ 15:00 ໂມງ, ຢູ່ທີ່ຕະຫຼາດຫຼັກຊັບລາວ , ຫ້ອງປະຊຸມຊັ້ນ 08 ຫ້ອງ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍການເປັນປະທານຂອງ ທ່ານ ອະພິສິດ ຣຸຈິກຽດ ກຳຈອນ ປະທານສະພາບໍລິຫານ ພ້ອມດ້ວຍສະມາຊິກສະພາບໍລິຫານ ລອທ, ມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 15 ທ່ານ, ແບ່ງເປັນຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມດ້ວຍຕົນເອງຈຳນວນ 08 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມ ແທນຈຳນວນ 07 ທ່ານ ຖືຮຸ້ນລວມ 92,329,495 ຮຸ້ນ ຄິດເປັນ 92.33 % ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ, ປະທານ ຈຶ່ງໄດ້ກ່າວເປີດກອງປະຊຸມ ແລະ ໄດ້ມອບໝາຍ ໃຫ້ພິທີກອນແນະນຳສະມາຊິກສະພາບໍລິຫານແຕ່ລະທ່ານ, ເຈົ້າໜ້າທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມ, ລະບຽບກອງປະຊຸມ ແລະ ວິທີການລົງຄະແນນສຽງ.

**ສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມປະຊຸມມີດັ່ງນີ້:**

| | | |
|---|---|---|
| 1. | ທ່ານ ອະພິສິດ ຣຸຈິກຽດກຳຈອນ | ປະທານກອງປະຊຸມ ປະທານສະພາບໍລິຫານ (ສະມາຊິກອິດສະຫຼະ) |
| 2. | ທ່ານ ເສດ ພັດທະນະມາດ | ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ |
| 3. | ທ່ານ ພິງຖານ ພິດຈຳນົງ | ສະມາຊິກສະພາບໍລິຫານ |
| 4. | ທ່ານ ນາງ ດວງສະໄໝ ເລົ່າຝຸງ | ສະມາຊິກສະພາບໍລິຫານ (ສະມາຊິກອິດສະຫຼະ) |

ພ້ອມດ້ວຍເຈົ້າໜ້າທີ່ທ່ານຜູ້ຕາງໜ້າຈາກຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ຜູ້ຕາງໜ້າຈາກຜູ້ກວດສອບບັນຊີພາຍນອກ, ຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ ແລະ ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ ກໍໄດ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້

| | | |
|---|---|---|
| 1. | ທ່ານ ນາງ ວັນນະພອນ ສຸບັນທາ | ວິຊາການ ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ສຄຄຊ |
| 2. | ທ່ານ ນາງ ວັງອຸໄທ ມຸລຣັຕນ໌ | ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ສຄຄຊ |
| 3. | ທ່ານ ນາງ ອອນອານົງ ບຸນນະສິນ | ພະແນກຈົດທະບຽນ ແລະ ເປີດເຜີຍຂໍ້ມູນ, ຕລຊລ |
| 4. | ທ່ານ ສອນໄຊ ດີລະພົນ | ຕ່າງໜ້າຈາກ ບໍລິສັດ ພຣາຍສວໍເຕີ້ເຮົ້າສກຼເປີ້ສ (ລາວ) ຈຳກັດຜູ້ດຽວ |
| 5. | ທ່ານ ລຳພັນ ອິນວົງຄຳ | ຕ່າງໜ້າຈາກ ບໍລິສັດ ພຣາຍສວໍເຕີ້ເຮົ້າສກຼເປີ້ສ (ລາວ) ຈຳກັດຜູ້ດຽວ |
| 6. | ທ່ານ ວັນສະເຫຼີມ ສີສຸຄຳມັ່ງ | ຕ່າງໜ້າຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ |

ຫຼັງຈາກນັ້ນ ພິທີກອນໄດ້ລາຍງານແຕ່ລະວາລະຂອງການປະຊຸມໃນມື້ນີ້ ແລະ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຊາບເຊິ່ງມີລາຍລະອຽດ ດັ່ງນີ້:

❖ **ວາລະກອງປະຊຸມ**

1. **ວາລະທີ 1** ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024.
2. **ວາລະທີ 2** ພິຈາລະນາ ແລະ ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2025 ແລະ ເອກະສານລາຍງານການເງິນ ຂອງບໍລິສັດ ປະຈຳປີ 2025.
3. **ວາລະທີ 3** ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026.
4. **ວາລະທີ 4** ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ ປະຈຳປີ 2025;
5. **ວາລະທີ 5** ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ ກວດສອບບັນຊີພາຍນອກ ປີ 2026.
6. **ວາລະທີ 6** ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ
7. **ວາລະທີ 7** ເລື່ອງອື່ນໆ (ຖ້າມີ)

❖ **ການລົງຄະແນນສຽງ:**

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນ ແລະ ຜູ້ຕ່າງໜ້າ ທ່ານໃດບໍ່ເຫັນດີ ຫຼື ບໍ່ຮັບຮອງ.
- ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ຫຼື ບໍ່ຮັບຮອງ ໃຫ້ທ່ານໝາຍເຄື່ອງໝາຍຄູນ (x) ແລະ ຂຽນຊື່, ນາມສະກຸນ ຈຳນວນຮຸ້ນ ລອທ ທີ່ທ່ານຖືຢູ່ ລົງໃນບັດລົງຄະແນນໃນວາລະນັ້ນໆ, ເຊິ່ງເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ພ້ອມທັງຍົກບັດດັ່ງກ່າວຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ, ເພື່ອນຳໄປກວດນັບຄະແນນສຽງໃນ ວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.
- ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນ ກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ເຊິ່ງບໍລິສັດໄດ້ ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມ, ຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນ, ທີ່ຮຽບຮ້ອຍແລ້ວ, ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນ ໃນກອງປະຊຸມຕື່ມອີກ.
- ການລົງຄະແນນສຽງທີ່ບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນ ລອທ ທັງ ໝົດໃນທີ່ປະຊຸມ.

- ກ່ອນການລົງຄະແນນສຽງແຕ່ລະວາລະ ແມ່ນຈະເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດ ມີ,ຄຳຖາມສາມາດຖາມໄດ້.

❖ **ການນັບຜົນການລົງຄະແນນສຽງ:**

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງທີ່ບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງປະຊຸມ, ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຕາມທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ, ໃນເວລາທີ່ຜູ້ຕາງໜ້າ ລົງທະບຽນເຂົ້າຮ່ວມປະຊຸມ ໂດຍນຳມາຫັກອອກຈາກຈຳນວນຮຸ້ນທັງໝົດຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນ ,ສຽງໃນແຕ່ລະວາລະ.
- ປະທານຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມໄດ້ຮັບຊາບຫຼັງຈາກການລົງຄະແນນ ສຽງ,ໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກ ສ່ວນ,ຮ້ອຍ.
- ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາທີ່ໄດ້ປະກາດ ໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນ ສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ເວລາຕໍ່ມາ ປະທານກໍ່ໄດ້ກ່າວເລີ່ມເຂົ້າສູ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ໂດຍລາຍງານເປັນແຕ່ລະວາລະ ຊຶ່ງມີລາຍ, ລະອຽດດັ່ງລຸ່ມນີ້:

**<u>ວາລະທີ 1</u> ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024.**

ປະທານໄດ້ລາຍງານຜົນການຈັດຕັ້ງປະຕິບັດກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາເພື່ອໃຫ້ຜູ້ຖືຮຸ້ນຮັບຊາບ ເພື່ອ ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024.

ຫຼັງຈາກນັ້ນປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ✓ ສາມາດຖາມໄດ້ໃນວາລະນີ້.

- ມີຄຳເຫັນຈາກ Mr. Kraiwal kadavanich ຜູ້ຖືຮຸ້ນ:
  ສ່ວນທີ 01 ໃນບົດລາຍງານກອງປະຊຸມຜູ້ຖືຮຸ້ນປີທີ່ຜ່ານເຫັນວ່າມີສ່ວນທີ່ບໍ່ຖືກຕ້ອງບໍ່ຫຼາຍ ເລີ່ມຈາກບົດບັນທຶກລາຍ ງານການປະຊຸມສະບັບພາສາອັງກິດໃນວາລະທີ 06 ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈາປີ 2024 ໃນການ ພິຈາລະນາສະມາຊິກສະພາບໍລິຫານທີ່ຄົບວາລະແລ້ວແຕ່ງຕັ້ງໃໝ່ ແຕ່ວ່າພາສາອັງກິດໃຊ້ຄຳວ່າ "Terminated" ຊຶ່ງ ເປັນຄຳທີ່ຮຸນແຮງ ແລະ ບໍ່ໃຫ້ກຽດສະມາຊິກສະພາບໍລິຫານ ເພາະວ່າມັນມີຄວາມໝາຍວ່າ "ຖືກຢຸດຕິ" ຊຶ່ງວ່າບໍ່ມີສະ ມາຊິກສະພາທ່ານໄດ້ເຮັດຜິດ ແລະ ໃນພາສາລາວກໍ່ໄດ້ບອກຊັດເຈນວ່າຄົບວາລະ, ຊຶ່ງຄວນຈະໃຊ້ເປັນ "Completed" ຫຼື "Complete of Term" ຈະເປັນການດີກວ່າທີ່ຈະໃຊ້ຄຳວ່າ "Terminated" ເພາະເປັນຄຳທີ່ຮຸນ ແຮງ ແລະ ຄວາມໝາຍບໍ່ຖືກຕ້ອງ, ຊຶ່ງໃນກອງປະຊຸມຜູ້ຖືຮຸ້ນປີທີ່ຜ່ານມາຜູ້ຮັບມອບສັນທະຂອງ Mr. Kraiwal kadavanich ໄດ້ມີການສະເໜີໃຈ້ວ່າມີຄວາມໝາຍບໍ່ຊັດເຈນ, ແຕ່ກໍ່ບໍ່ເຫັນດີທີ່ຈະໃຊ້ພາສາໄທເປັນພາສາທີ 3 ມາ ປຽບທຽບເພາະພາສາໄທ ກັບ ພາສາລາວມີຄຳທີ່ໃກ້ຄຽງກັນ ອາດຈະໃຊ້ພາສາອື່ນເຊັ່ນພາສາຈີນ ຫຼື ພາສາອື່ນໆ ກໍ່ໄດ້

ເພື່ອໃຫ້ມີຄວາມໝາຍຊັດເຈນ, ສະເໜີໃຫ້ທາງທ່ານປະທານເຮັດບົດບັນທຶກລາຍງານເປັນພາສາທີ 03 ໃຊ້ເປັນການພາຍໃນເພື່ອເປັນແນບໃຫ້ທັງ 02 ພາສາທີເອົາມານຳສະເໜີຖຸກຕ້ອງ ຊັດເຈນ. ດັ່ງນັ້ນ: ບົດບັນທຶກລາຍງານກອງປະຊຸມຜູ້ຖືຮຸ້ນ ສະບັບພາສາອັງກິດຕ້ອງມີການແກ້ໄຂຄຳໃຫ້ເໝາະສົມ.

ສ່ວນທີ 02 ໃນໜ້າສຸດທ້າຍ ທີ່ຈົບວາລະທີ 06 ກ່ອນຈະມີຄຳຖາມໃນວາລະອື່ນໆບໍ່ແນ່ໃຈວ່າໃນໜັງສືເຊີນປະຊຸມຜູ້ຖືຮຸ້ນຂອງປີ 2024 ໄດ້ລະບຸວ່າເປັນວາລະທີ່ 07 ອື່ນໆ ຫຼື ບໍ່ ເພາະວ່າຖ້າບໍ່ມີສຽງຂອງຜູ້ຖືຮຸ້ນທີ່ຄົບຈຳນວນໃນການສະເໜີວາລະຂຶ້ນມາ ໃນກອງປະຊຸມຈະບໍ່ສາມາດພິຈາລະນາວາລະທີ 07 ໄດ້ ແຕ່ທ່ານປະທານ ຍັງຕ້ອງອ່ານວ່າຄືວາລະອື່ນໆທີ່ມັນບໍ່ມີເພື່ອເຮັດໃຫ້ຈຳນວນຕົວເລກຄົບວາລະຕາມໜັງສືເຊີນປະຊຸມ. ໃນກອງປະຊຸມຜູ້ຖືຮຸ້ນປີທີຜ່ານຫຼັງຈາກວາລະອື່ນໆຈົບລົງແລ້ວ ໄດ້ໃຫ້ຜູ້ຖືຮຸ້ນຊັກຖາມ ໃນພາວາລາວກໍ່ຈະມີການລະບຸວ່າຜູ້ມອບສັນທະຂອງ Mr. Kraiwal kadavanich ມີການທັກທວງໄດ້ຍ້ອນກັບໄປເປັນວາລະທີ 06 ນັ້ນຖຸກຕ້ອງແລ້ວ ແຕ່ໃນພາສາອັງກິດກັບລະບຸວ່າບໍ່ມີຄຳຖາມ ຫຼື ຄຳຄິດເຫັນຈາກຜູ້ຖືຮຸ້ນ ແຕ່ຕົວຈິງພາສາລາວມັນລະບຸວ່າມີ ເຮັດໃຫ້ມັນບໍ່ຕົງກັນຕ້ອງໄດ້ແກ້ໄຂສະບັບພາສາອັງກິດ, ສ່ວນພາສາລາວກໍ່ອາດຈະຕ້ອງມີການອ່ານໃນເລື່ອງຂອງວາລະອື່ນໆທີ່ຈະຕ້ອງຖືກຕັດອອກໄປເພາະວ່າບໍ່ມີວາລະອື່ນໆໃຫ້ພິຈາລະນາ ເພື່ອໃຫ້ວາລະຄົບ ຫຼັງຈາກນັ້ນຄ່ອຍເປີດໂອກາດໃຫ້ຜູ້ຖືຮຸ້ນຊັກຖາມ ຫຼື ອອກຄຳຄິດເຫັນຕໍ່ໄປ.

ສ່ວນທີ 03 ໃນສ່ວນເອກະສານໜັງສືເຊີນປະຊຸມຜູ້ຖືຮຸ້ນໃນຄັ້ງນີ້, ຊຶ່ງໃນໜັງສືເຊີນປະຊຸມຜູ້ຖືຮຸ້ນສະບັບພາສາອັງກິດຊຸດປະຈຸບັນບອກວ່າຕະຫຼາດຫຼັກຊັບລາວເປັນ "Lao securities exchange co.,ltd" ແຕ່ໃນສະບັບພາສາລາວໄມ່ໄດ້ບອກເປັນບໍລິສັດ ທີ່ສັງເກດເຫັນຢູ່ໃນທັງໜ້າໜງັສືເຊີນປະຊຸມ ແລະ ໃບມອບສິດ, ໃນສ່ວນເອກະສານປະກອບອື່ນໆໃນຄັ້ງນີ້ມີໃນສ່ວນຂອງ ບົດລາຍງານ ຊຶ່ງຖ້າຜູ້ຖືຮຸ້ນ ຫຼື ຕົວແທນຜູ້ຖືຮຸ້ນມາຮັບເອກະສານຈາກຕະຫຼາດຫຼັກຊັບກ່ອນໜ້ານີ້ຈະບໍ່ໄດ້ຮັບ ບົດລາຍງານ ໄປເບິ່ງ ຊຶ່ງໃນສ່ວນຂອງບົດລາຍງານນັ້ນເຮັດໃວ້ດີຫຼາຍແລ້ວ ບົດລາຍງານກໍ່ໜ້າຈະໄປຢູ່ໃນການຮັບຮອງພ້ອມເພື່ອທີ່ຜູ້ຖືຮຸ້ນຈະຕ້ອງຮັບຮອງໃນສິ່ງທີ່ເຮັດຂຶ້ນມາຊຶ່ງມີການຮຽບຮຽງໃວ້ເປັນຢ່າງດີ ມີຂໍ້ຕຳໜິດຽວໃນບົດລາຍງານຄືໜ້າ "Organization Chart" ເພາະຕົວໜັງສືມັນນ້ອຍຈຳເປັນຕ້ອງປັ້ນສີສະເພາະໜ້າທີ່ຕົວໜັງສືນ້ອຍເພາະຖ້າປັ້ນເປັນຂາວ-ດຳ ຈະເຮັດໃຫ້ອ່ານບໍ່ອອກ. ນອກນັ້ນ ບົດລາຍງານ ເຮັດອອກໄດ້ດີໜ້າຈະຖືກນຳສະເໜີເຂົ້າໄປໃນການຮັບຮອງພ້ອມກັບງົບການເງິນເພາະເປັນການດຳເນີນຜົນການດຳເນີນງານທີ່ຜ່ານຂອງປີທີ່ຜ່ານມາ.

- ທ່ານ ເສດ ພັດທະນະມາດ ຜູ້ອຳນວຍການໃຫຍ່: ສະແດງຄວາມຂອບໃຈຕໍ່ຄຳຄິດເຫັນຂອງຜູ້ຖືຮຸ້ນ Mr. Kraiwal kadavanich ແລ້ວຮັບເອົາຄຳຄິດເຫັນພ້ອມທັງມອບໃຫ້ກອງເລຂາກອງປະຊຸມແກ້ໄຂໃຫ້ຖືກຕ້ອງ.

ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

**ມະຕິ:** ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024.

- ເຫັນດີຈຳນວນ **92,329,495** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ວາລະທີ 2</u> ພິຈາລະນາ ແລະ ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2025 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2025.**

ທ່ານ ນາງ ສຸກັນຍາ ຈຳປາແສງ ຮອງຜູ້ອຳນວຍການໃຫຍ່ບໍລິສັດ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບບົດລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025 ໂດຍຫຍໍ້ດັ່ງນີ້:

| ຜະລິດຕະພັນ | ແຜນປະຈຳປີ 2025 | | ຜະລິດຕະພັນ | ຍອດຂາຍປີ 2025 | |
|---|---|---|---|---|---|
| | (ລ້ານກີບ) | (%) | | (ລ້ານກີບ) | (%) |
| ນ້ຳມັນ CPO | 60,000.00 | 84.09 | ນ້ຳມັນ CPO | 36,764.53 | 91.75 |
| ຕົ້ນກ້າ | 1,750.00 | 2.45 | ຕົ້ນກ້າ | 172.03 | 0.43 |
| ກາກປາມ | 6,000.00 | 8.41 | ກາກປາມ | 2,431.43 | 6.07 |
| ປຸ່ຍ | 3,600.00 | 5.05 | ປຸ່ຍ | 703.31 | 1.75 |
| ລວມ | 71,350.00 | 100.00 | ລວມ | 40,071.30 | 100.00 |

1) **ລາຍຮັບ.**

ບໍລິສັດມີລາຍຮັບໃນປີ 2025 ທັງໝົດ 40,071.30 ລ້ານກີບ, ເມື່ອທຽບໃສ່ແຜນແມ່ນປະຕິບັດໄດ້ 56.16 ສ່ວນຮ້ອຍ ໃນນັ້ນລາຍຮັບສ່ວນໃຫຍ່ແມ່ນມາຈາກການຈຳໜ່າຍ ນ້ຳມັນປາມດິບ (CPO) ກວມເອົາ 91.75% ຂອງ ລາຍຮັບທັງໝົດ ແລະ ເມື່ອທຽບໃສ່ ລາຍຮັບປີ 2024 ຫຼຸດລົງໃນອັດເທົ່າກັບ 8.20 ສ່ວນຮ້ອຍ.

2) **ກຳໄລ-ຂາດທຶນ.**

ໃນປີ 2025 ບໍລິສັດຂາດທຶນຈາກການດຳເນີນທຸລະກິດ ຈຳນວນ 5,257.17 ລ້ານກີບ.

3) **ຊັບສິນ.**

ວັນທີ 31 ທັນວາ 2024 ບໍລິສັດມີຊັບສິນລວມເທົ່າກັບ 74,688.44 ລ້ານກີບ ເມື່ອທຽບໃສ່ປີ 2025 ເທົ່າກັບ 89,922.56 ລ້ານກີບ ເຊິ່ງເພີ່ມຂຶ້ນຈາກປີ 2024 ໃນອັດຕາເທົ່າກັບ 20.40 ສ່ວນຮ້ອຍ.

4) **ໜີ້ສິນ.**

ບໍລິສັດມີໜີ້ສິນລວມ ໃນປີ 2024 ເທົ່າກັບ 31,830.15 ລ້ານກີບ ເມື່ອທຽບໃສ່ປີ 2025 ມີໜີ້ສິນເທົ່າກັບ 52,321.44 ລ້ານກີບ ແມ່ນເພີ່ມຂຶ້ນ 64.38 ສ່ວນຮ້ອຍ.

ຫຼັງຈາກລາຍງານໂດຍຫຍໍ້ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ໃນວາລະນີ້.

- ມີຄຳເຫັນຈາກ Mr. Kraiwal kadavanich ຜູ້ຖືຮຸ້ນ:

ສ່ວນທີ 01 ໃນສ່ວນຂອງການເຮັດເອກະສານສະໄລ້ມານຳສະເໜີຢາກໃຫ້ມີຄວາມເປັນມືອາຊີບດ້ານທຸລະການ ຖ້າເບິ່ງສະໄລ້ໃນຕອນທີ່ມານຳສະເໜີໃນຫ້ອງປະຊຸມບໍ່ຄວນເຮັດສີພື້ນຫຼັງເປັນສີເຂັ້ມ ແລະ ຕົວໜັງສືນ້ອຍເພາະຈະເຮັດໃຫ້ບໍ່ເຫັນຕົວໜັງສືທີ່ຊັດເຈນ ແລະ ອ່ານຍາກ ເມື່ອເປີດໃນຫ້ອງປະຊຸມທີ່ບໍ່ໄດ້ປິດໄຟ.

ສ່ວນທີ 02 ໃນຊ່ອງຂອງທ່ານປະທານທີ່ອ່ານປະກາດຜົນການລົງຄະແນນສຽງນັ້ນ ທ່ານປະທານໃຊ້ຄຳວ່າ ຈຳນວນ "ສຽງ" ຊຶ່ງເປັນຄຳທີ່ຖຶກຕ້ອງແລ້ວ ແຕ່ວ່າສະໄລ້ໂຊໃນຫ້ອງປະຊຸມກັບສະແດງເປັນຄຳວ່າ "ຮຸ້ນ" ຊຶ່ງເປັນການໃຊ້ຄຳທີ່ບໍ່ຕົງກັນ ຢາກໃຫ້ແກ້ໄຂໃຫ້ມັນຖຶກຕ້ອງ.

ສ່ວນທີ 03 ໃນດ້ານຂອງບົດລາຍງານປະຈຳປີ ຖ້າຈະເຮັດໃຫ້ໄດ້ປະສິດທິພາບຫຼາຍກວ່າ ຄວນຈະເຮັດເປັນໂທນສີເຫຼືອງສົ້ມ ເພາະສີທີ່ໃຊ້ໃນປະຈຸບັນເວລາຂຶ້ນໂຊໃນຫ້ອງປະຊຸມ ເຮັດໃຫ້ເຫັນບໍ່ຊັດເຈນ.

- ທ່ານ ອະພິສິດ ຣຸຈິກຸຈກຳຈອນ ປະທານກອງປະຊຸມ: ສະແດງຄວາມຂອບໃຈຕໍ່ຄຳຄິດເຫັນຂອງຜູ້ຖືຮຸ້ນ Mr. Kraiwal kadavanich ແລ້ວຮັບເອົາຄຳຄິດເຫັນພ້ອມທັງມອບໃຫ້ກອງເລຂາກອງປະຊຸມປັບປຸງ ແລະ ແກ້ໄຂ.

ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງບົດລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2025, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

**ມະຕິ:** ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງບົດລາຍງານການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2025.

- ເຫັນດີຈຳນວນ **92,329,495** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ວາລະທີ 3</u> ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026.**

ປະທານສະພາບໍລິຫານໄດ້ສະເໜີແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026 ຕໍ່ກອງປະຊຸມ ໂດຍລາຍລະອຽດຫຼັກແມ່ນເປັນໄປຕາມ ທ່ານ ເສດ ພັດທະນະມາດ ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ບໍລິສັດໄດ້ອະທິບາຍດັ່ງນີ້: ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາແຜນການ ປະຈຳປີ 2026.

| ລາຍການ | 2026 ງົບປະມານ | |
|---|---|---|
| | ລດກ | ລອທ |
| **ປະລິມານການຂາຍ** | | |
| ນ້ຳມັນປາມດິບ (ໂຕນ) | - | 3,000 |
| ກາກປາມ (ໂຕນ) | - | 1,000 |
| ປຸ໋ຍ (ໂຕນ) | - | 200 |
| ຕົ້ນກ້າປາມ (ຕົ້ນ) | - | 25,000 |
| ນ້ຳມັນກະຊວນຊີ້ອະພາບ (ລິດ) | - | - |
| **ລາຄາຂາຍ** | - | - |
| ນ້ຳມັນປາມດິບ (ກີບ/ກິໂລກຣາມ) | - | 23,000 |
| ກາກປາມ (ກີບ/ກິໂລກຣາມ) | - | 3,500 |
| ປຸ໋ຍ (ກີບ/ກິໂລກຣາມ) | - | 15,000 |
| ຕົ້ນກ້າປາມ (ກີບ/ຕົ້ນ) | - | 60,000 |
| ນ້ຳມັນກະຊວນຊີ້ອະພາບ (ກີບ/ລິດ) | - | - |
| **ລາຍຮັບ (ລ້ານກີບ)** | | |
| ນ້ຳມັນປາມດິບ | - | 69,000 |
| ກາກປາມ | - | 3,500 |
| ປຸ໋ຍ | - | 3,000 |
| ຕົ້ນກ້າປາມ | - | 1,500 |
| ນ້ຳມັນກະຊວນຊີ້ອະພາບ | - | - |
| ອື່ນໆ | - | - |
| **ລວມ** | - | 77,000 |

ແຜນການຂາຍນ້ຳມັນປາມດິບ CPO: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ການຜະລິດຂອງບໍລິສັດ. ນອກຈັກ ຄວາມຕ້ອງການຂອງຜູ້ບໍລິໂພກ ບໍລິສັດ ມີນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2026.

ແຜນການຂາຍປາມ: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ຄວາມຕ້ອງການຊື້ຂອງຜູ້ບໍລິໂພກໃນປະຈຸບັນ. ບໍລິສັດ ມີ ນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2026.

ແຜນການຂາຍປຸ໋ຍ: ໃນປີ 2026 ບໍລິສັດໄດ້ສົ່ງເສີມຊາວກະສິກອນ (ລູກສວນບໍລິສັດ ແລະ ນອກສວນບໍລິສັດ) ເພື່ອ ໃສ່ປຸ໋ຍປາມຕື່ມ.

ແຜນການຂາຍເບ້ຍປາມ: ບໍລິສັດໄດ້ວາງແຜນການເພື່ອຂໍການຢັ້ງຢືນແນວພັນປາມລາວວຽງ. ເພື່ອສົ່ງອອກ ແລະ ຄາດ ຄະເນການຂາຍຕາມປະລິມານຂອງບໍລິສັດ ມັນຈະຖືກຜະລິດໃນປີ 2026.

ແຜນການຂາຍນ້ຳມັນເຊື້ອໄຟຂອງບໍລິສັດຈະເຮັດບົດວິພາກ ແລະ ນຳສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ. ເພື່ອຮ້ອງຂໍໂຄຕ້ານຳເຂົ້ານ້ຳມັນ

ຫຼັງຈາກລາຍງານໂດຍຫຍໍ້ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດ ເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງຫມົດ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

**ມະຕິ:** ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026.

- ເຫັນດີຈຳນວນ **92,329,495** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ວາລະທີ 4</u> ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ ປະຈຳປີ 2025**

ປະທານໄດ້ລາຍງານຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025 ທີ່ຜ່ານມາເຫັນວ່າບໍລິສັດຂາດທຶນຈາກ ການດຳເນີນທຸລະກິດເທົ່າກັບ (5,257.17) ລ້ານກີບ ດັ່ງນັ້ນ ທາງສະພາບໍລິຫານຈຶ່ງລົງມະຕິບໍ່ໃຫ້ມີການຈ່າຍເງິນປັນຜົນປະຈຳ ປີ 2025.

ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມ ໄດ້, ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງໃຫ້ບໍ່ມີການຈ່າຍເງິນປັນຜົນຈາກການ ດຳເນີນທຸລະກິດ ປະຈຳປີ 2025, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳ ນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

**ມະຕິ:** ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງໃຫ້ບໍ່ມີການຈ່າຍເງິນປັນຜົນ ຈາກການດຳເນີນທຸລະກິດປະຈຳປີ 2025

- ເຫັນດີຈຳນວນ **92,329,495** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງປະຊຸມ.

**<u>ວາລະທີ 5</u> ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2026**

ປະທານໄດແຈ້ງໃຫ້ກອງປະຊຸມຮັບຊາບວ່າ ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ແລະ ແຈ້ງການຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດໃຫ້ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງມີຜູ້ກວດສອບບັນຊີພາຍນອກ ໂດຍຕ້ອງເປັນຜູ້ກວດສອບທີ່ໄດ້ຮັບການຮັບຮອງຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເຊິ່ງຜ່ານການເຫັນດີຂອງກອງປະຊຸມສະພາບໍລິຫານ, ຈຶ່ງສະເໜີ ບໍລິສັດ ພຣາຍສວໍເຕີເຮົ້າສ ກຸບເປີສ(ລາວ) ຈຳກັດຜູ້ດຽວ (PriceWaterHouseCoopers (Lao) Sole Co., Ltd) ເປັນຜູ້ກວດສອບບັນຊີພາຍນອກ ຂອງບໍລິສັດສະເພາະປະຈຳປີ 2026 ໂດຍມີຄ່າບໍລິການເປັນເງິນຈຳນວນບໍ່ເກີນ 18,000 ໂດລາສະຫະລັດ. ເນື່ອງຈາກ, ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ ແມ່ນເປັນຜູ້ກວດສອບບັນຊີໃຫ້ກັບບໍລິສັດມາແຕ່ການປະກາດຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ, ມີປະສົບການ, ມີຄວາມລະອຽດຮອບຄອບ, ມີຄວາມຊື່ສັດສຸດຈະລິດໃນໜ້າທີ່ ແລະ ເປັນບໍລິສັດກວດສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ ໃນສ່ວນຂອງຄ່າບໍລິການນັ້ນກໍ່ເປັນຈຳນວນທີ່ເໝາະສົມກັບວຽກງານໃນການກວດກາບັນຊີຂອງບໍລິສັດ ເຊິ່ງມີຈຳນວນຫຼວງຫຼາຍ ແລະ ເພື່ອໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ, ກວດສອບໄດ້ ຈຶ່ງມີຄວາມຈຳເປັນຕ້ອງນຳໃຊ້ບຸກຄະລາກອນທີ່ມີຄວາມຊ່ຽວຊານ ໂດຍບາງທ່ານກໍເປັນບຸກຄະລາກອນຈາກຕ່າງປະເທດ.

ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ໃນວາລະນີ້.

- ມີຄຳຖາມ ແລະ ຄຳເຫັນຈາກ **Mr. Kraiwal kadavanich** ຜູ້ຖືຮຸ້ນ:
  ໃນສ່ວນຂອງຄຳຖາມ: ເປັນຍັງໃນຕາຕາລາງປຽບທຽບຄ່າກວດສອບພາຍນອກໃນແຕ່ລະປີ ຄ່າບໍລິການກວດສອບພາຍນອກຈຶ່ງຫຼຸດລົງທຸກໆປີເມື່ອທຽບໃສ່ 02 ປີທີ່ຜ່ານມາ ເປັນຍ້ອນວ່າທາງບໍລິສັດມີຄວາມສາມາດເຮັດໃຫ້ຄ່າບໍລິການຫຼຸດລົງ ຫຼື ເພາະວ່າຂະໜາດການດຳເນີນທຸລະກິດຫຼຸດລົງ ?
  ໃນສ່ວນຂອງຄຳຄິດເຫັນ: ໃນຕາຕະລາງສົມທຽບຄ່າບໍລິການກວດສອບບັນຊີພາຍນອກຄວນຈະໃສ່ສະກຸນເງິນທີ່ຫົວຕາຕະລາງເພື່ອຄວາມຊັດເຈນ.
- ທ່ານ ເສດ ພັດທະນະມາດ ຜູ້ອຳນວຍການໃຫຍ່: ສະແດງຄວາມຂອບໃຈຕໍ່ກັບຄຳຖາມຂອງ **Mr. Kraiwal kadavanich** ໂດຍໃນສ່ວນຂອງຄ່າບໍລິການກວດສອບບັນຊີພາຍນອກຂອງບໍລິສັດ ທີ່ຫຼຸດລົງນັ້ນທາງຜູ້ບໍລິຫານໄດ້ມີການສົມທຽບຄ່າບໍລິການຈາກບໍລິສັດອື່ນໆເພື່ອເປັນບ່ອນອີງມາປຽບທຽບ ແລະ ທີມງານຝ່າຍບໍລິຫານ - ທີມງານຝ່າຍບັນຊີ-ການເງິນໄດ້ມີການກະກຽມເອກະສານຕຽມຄວາມພ້ອມໄວ້ເປັນຢ່າງດີ ເພື່ອຊ່ວຍເຮັດໃຫ້ຜູ້ກວດສອບບັນຊີພາຍນອກໃຊ້ຊັບພະຍາກອນນ້ອຍລົງ, ເຮັດໃຫ້ຄ່າກວດສອບຫຼຸດລົງເພື່ອເປັນຜົນປະໂຫຍດຕໍ່ຜູ້ຖືຮຸ້ນ. ໃນສ່ວນຂອງຄຳຄິດເຫັນນັ້ນມອບໃຫ້ກອງເລຂາກອງປະຊຸມປັບປຸງ ແລະ ແກ້ໄຂ.

ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການການກວດສອບບັນຊີພາຍນອກ ປະຈຳປີ 2026, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງຫມົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

**ມະຕິ:** ກອງປະຊຸມໄດ້ມີມະຕິເຫັນດີແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການການກວດສອບບັນຊີພາຍນອກ ປະຈຳປີ 2026

- ເຫັນດີຈຳນວນ **92,329,495** ສຽງ ເທົ່າກັບ **100** ສ່ວນຮ້ອຍ ຂອງຈຳນວນສຽງທັງຫມົດທີ່ເຂົ້າຮ່ວມກອງປະຊຸມ.

## <u>ວາລະທີ 6</u> ພິຈາລະນາແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ.

ປະທານໄດ້ແຈ້ງໃຫ້ກອງປະຊຸມຮັບຊາບວ່າ ໃນປະຈຸບັນສະມາຊິກສະພາບໍລິຫານທຸກທ່ານໄດ້ປະຕິບັດໜ້າທີ່ຕ່າງໆຂອງບໍລິສັດຄົບວາລະຕາມກົດໝາຍວ່າດ້ວຍວິສາຫະກິດຄື 2 ປີ ຈຳເປັນຕ້ອງໄດ້ມີການເລືອກຕັ້ງສະມາຊິກສະພາບໍລິຫານໃໝ່ ເພື່ອປະຕິບັດໜ້າທີ່ໃນນາມຂອງບໍລິສັດຕໍ່ໄປເຊິ່ງມີລາຍລະອຽດດັ່ງຕໍ່ໄປນີ້:

### 6.1 ພິຈາລະນາແຕ່ງຕັ້ງ ທ່ານ ອະພິສິດ ຣຸຈິກຽດກຳຈອນ ເປັນປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະຂອງບໍລິສັດ.

ເນື່ອງຈາກ ທ່ານ ອະພິສິດ ຣຸຈິກຽດກຳຈອນ ເປັນຜູ້ຖືຮຸ້ນ ແລະ ເປັນຜູ້ມີສ່ວນໄດ້ສ່ວນເສຍໃນບັນຫາດັ່ງກ່າວນີ້ຕາມກົດໝາຍວ່າດ້ວຍວິສະຫາກິດ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາ 144 (3) ຈຶ່ງຖືກຈຳກັດສິດໃນການລົງຄະແນນສຽງ ແລະ ໄດ້ຂໍໃຫ້ ທ່ານ ອະພິສິດ ຣຸຈິກຽດກຳຈອນ ອອກຈາກຫ້ອງປະຊຸມກ່ອນຊົ່ວຄາວ, ໂດຍໄດ້ແຕ່ງຕັ້ງທ່ານ ພົງຖານ ພິດຈຳນົງ ເປັນປະທານຊົ່ວຄາວ, ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ອະພິສິດ ຣຸຈິກຽດກຳຈອນ ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ6.

ຫຼັງຈາກອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ອະພິສິດ ຣຸຈິກຽດກຳຈອນ ແລ້ວໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້.

ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແຕ່ງຕັ້ງ ທ່ານ ອະພິສິດ ຣຸຈິກຽດກຳຈອນ ເປັນປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະຂອງບໍລິສັດ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ

**ມະຕິ:** ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງພິຈາລະນາ ແຕ່ງຕັ້ງ ທ່ານ ອະພິສິດ ຣຸຈິກຽດກຳຈອນ ເປັນປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະຂອງບໍລິສັດ.

- ເຫັນດີຈຳນວນ 91,944,495 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

**6.2 ພິຈາລະນາແຕ່ງຕັ້ງ ທ່ານ ພິງຖານ ພິດຈຳນິງ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.**

ເນື່ອງຈາກ ທ່ານ ພິງຖານ ພິດຈຳນິງ ເປັນຜູ້ຖືຮຸ້ນ ແລະ ເປັນຜູ້ມີສ່ວນໄດ້ສ່ວນເສຍໃນບັນຫາດັ່ງກ່າວນີ້ຕາມກົດໝາຍວ່າ ດ້ວຍວິສະຫາກິດ ສະບັບປັບປຸງ ເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ມາດຕາ 144 (3) ຈຶ່ງຖືກຈຳກັດສິດໃນການລົງຄະແນນສຽງ ແລະ ໄດ້ຂໍໃຫ້ ທ່ານ ພິງຖານ ພິດຈຳນິງ ອອກຈາກຫ້ອງປະຊຸມກ່ອນຊົ່ວຄາວ, ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ພິງຖານ ພິດຈຳນິງ ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ6.

ຫຼັງຈາກປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ພິງຖານ ພິດຈຳນິງ ແລ້ວໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ໃນວາລະນີ້.

- ມີຄຳເຫັນຈາກ **Mr. Kraiwal kadavanich** ຜູ້ຖືຮຸ້ນ:

ສ່ວນທີ 01 ການລົງຄະແນນສຽງໃນວາລະທີ 06 ນີ້ ໄດ້ມີການນຳສະເໜີວ່າ ຈະບໍ່ໃຊ້ຫຸ້ນຂອງສະມາຊິກສະພາບໍລິຫານທີ່ຄົບມາລະມາມີສິດອອກສຽງ ອັນທີ່ຈິງແລ້ວບໍ່ແມ່ນເລື່ອງຜິນປະໂຫຍດທີ່ຊັບຊ້ອນໃນເລື່ອງຂອງທຸລະກິດ ແຕ່ວ່າໃນເລື່ອງຂອງການໃຊ້ສິດເລືອກຕົນເອງເປັນສະມາຊິກສະພາບໍລິຫານນັ້ນເຮັດໄດ້ ພຽງແຕ່ວ່າທ່ານເລືອກທີ່ຈະບໍ່ໃຊ້ສິດເພື່ອສະແດງຄວາມໂປ່ງໃສໃນການທີ່ຈະບໍ່ໃຊ້ສິດນັ້ນຊຶ່ງເຫັນວ່າດີ, ແຕ່ກໍ່ຄວນປັບແກ້ໃຫ້ມັນດຸດີກວ່າຈະໃຫ້ບອກວ່າທ່ານທີໝົດວາລະຈະບໍ່ສາມາດໃຊ້ສິດສຽງນັ້ນໄດ້ ຄວນຈະບອກວ່າສະມາຊິກສະພາບໍລິຫານສະແດງຄວາມບໍລິສຸດໃຈທີ່ຈະບໍ່ໃຊ້ສິດສຽງນັ້ນຕັ້ງແຕ່ທຳອິດ.

ສ່ວນທີ 02 ໃນເລື່ອງການເຊີນສະມາຊິກສະພາບໍລິຫານອອກຫ້ອງປະຊຸມນັ້ນ ສະມາຊິກສະພາບໍລິຫານທີ່ຍັງຢູ່ໃນວາລະບໍ່ຄວນຈະເປັນຄົນເຊີນສະມາຊິກສະພາບໍລິຫານທີໝົດວາລະອອກໄປ ມັນເໝືອນກົ້ງໆໄລ່ ຄວນໃຫ້ພິທີກອນເປັນຜູ້ບອກວ່າເນື່ອງຈາກເປັນວາລະພິຈາລະນາຂອງສະມາຊິກສະພາບໍລິຫານຂອງທ່ານນັ້ນ ຂໍໃຫ້ທ່ານອອກຈາກຫ້ອງປະຊຸມຊົ່ວຄາວເພື່ອທີຈະພິຈາລະນາກັນມັນຈະດຸດີກວ່າ.

ສ່ວນທີ 03 ໃນເອກະສານປະກອບວາລະທີ 06 ຊຶ່ງມີປະຫວັດຂອງສະມາຊິກສະພາບໍລິຫານ ເຫັນລະບຸວ່າເປັນເອກະສານປະກອບວາລະທີ 6 ແລະ 7 ຊຶ່ງຄວາມຈິງແລ້ວມັນມີແຕ່ວາລະທີ 06 ວາລະດຽວ, ແລ້ວໃນເອກະສານປະກອບນີ້ຄວນມີແຕ່ປະຫວັດຂອງສະມາຊິກສະພາບໍລິຫານທີ່ກ່ຽວຂ້ອງກັບວາລະນັ້ນເພື່ອເອົາມາເປັນຂໍ້ມູນປະກອບ ແລະ ຄວນມີສະມາຊິກສະພາບໍລິຫານ ຜູ້ຮັບມອບສັນທະ ອີກ 02 ທ່ານ ຕາມລຳດັບ ລວມຖືງການປັບປຸງຄຳສັບໃນພາສາລາວໃຫ້ເປັນໄປໃນທິດທາງດຽວກັນ.

ສ່ວນທີ 04 ໃນວາລະການແຕ່ຕັ້ງຖ້າ ທ່ານປະທານກອງປະຊຸມ ແລະ ສະມາຊິກສະພາບໍລິຫານໝົດວາລະພ້ອມກັນຄວນແຕ່ງຕັ້ງສະມາຊິກສະພາບໍລິຫານທ່ານອື່ນທີຍັງບໍ່ໝົດວາລະມາເປັນປະທານກອງປະຊຸມຊົ່ວຄາວແທນກ່ອນເພື່ອຄວາມໂປ່ງໃສ ຫຼັງຈາກນັ້ນພໍດຳເນີນກອງປະຊຸມຄົບວາລະນັ້ນແລ້ວຄ່ອຍມອບປະທານກອງປະຊຸມກັບຄືນເໝືອນເດີມ.

- ທ່ານ ອະພິສິດ ຣຸຈິກຽດກຳຈອນ ປະທານກອງປະຊຸມ: ສະແດງຄວາມຂອບໃຈຕໍ່ຄຳຄິດເຫັນຂອງຜູ້ຖືຮຸ້ນ **Mr. Kraiwal kadavanich** ແລ້ວຮັບເອົາຄຳຄິດເຫັນພ້ອມທັງມອບໃຫ້ກອງເລຂາກອງປະຊຸມປັບປຸງ ແລະ ແກ້ໄຂໃນກອງປະຊຸມຄັ້ງຕໍ່.

ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແຕ່ງຕັ້ງ ທ່ານ ພິງຖານ ພິດຈຳນົງ ເປັນສະມາຊິກສະພາບໍລິຫານຂອງ ບໍລິສັດ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ

**ມະຕິ:** ກອງປະຊຸມໄດ້ມີມະຕິເຫັນດີຮັບຮອງພິຈາລະນາ ແຕ່ງຕັ້ງ ທ່ານ ພິງຖານ ພິດຈຳນົງ ເປັນສະມາຊິກສະພາບໍລິຫານຂອງ ບໍລິສັດ.

- ເຫັນດີຈຳນວນ 92,319,495 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

ຖືວ່າໄດ້ພິຈາລະນາຄົບວາລະການປະຊຸມແລ້ວ ແລະ ປະທານໄດ້ສະເໜີທີ່ປະຊຸມສຳຫຼັບຜູ້ທີ່ຢາກປະກອບຄຳຄິດຄຳເຫັນຕື່ມ ແລະ ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ປະທານໄດ້ກ່າວຄຳຂອບໃຈບັນດາທ່ານຜູ້ຖືຮຸ້ນ ແລະ ແຂກຜູ້ທີ່ມີກຽດທຸກໆທ່ານ ຂໍອວຍພອນໄຊໃຫ້ບັນດາທ່ານ ຈົ່ງມີສຸຂະພາບແຂງແຮງ ປະສົບຜົນສຳເລັດໃນໜ້າທີ່ການງານ ແລະ ຈົ່ງມີສຸຂະພາບແຂງແຮງ.

ດັ່ງນັ້ນ ປະທານກ່າວປິດກອງປະຊຸມເວລາ 16:15 ໂມງ, ຈຶ່ງຮຽນມາເພື່ອຊາບ.

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ອະພິສິດ ຣຸຈິກຽດກາຈອນ
ປະທານກອງປະຊຸມ

ຜູ້ບັນທຶກກອງປະຊຸມ